# ປະກາດຮັບສະໝັກ

ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA) ເພື່ອຈັດຕັ້ງປະຕິບັດໂຄງການ ສົ່ງເສີມກະສິກຳນິເວດໃຫ້ຊາວນາຂະໜາດນ້ອຍ (Support eco-agrology agriculture for small farmers) ມີຄວາມຕ້ອງການຮັບພະນັກງານ 4 **ຕຳແໜ່ງ**: ຜູ້ປະສານງານຂັ້ນແຂວງ 1 ຕຳແຫນ່ງ ແລະ ຜູ້ປະສານງານຂັ້ນເມືອງ 3 ຕຳແຫນ່ງ ປະຈຳໂຄງການຢູ່ຫ້ອງການ ແຂວງຈຳປາສັກ ໄລຍະເວລາ 3 ປີ

**ໜ້າທີ່ຮັບຜິດຊອບ:**

- ສ້າງແຜນກິດຈະກຳປະຈຳປີ ປະຈຳໄຕມາດ ແລະ ປະຈຳເດືອນ ພ້ອມນຳພາທີມງານຈັດຕັ້ງປະຕິບັດກິດຈະກຳ
- ຈັດຕັ້ງປະຕິບັດ, ສົ່ງເສີມ ແລະ ພັດທະນາກິດຈະກຳດ້ານກະສິກຳ, ໃນການຈັດຕັ້ງປະຕິບັດໂຄງການສົ່ງເສີມຄວາມເຂັ້ມແຂງ, ລະບົບການດຳລົງຊີວິດໃນຊຸມຊົນໃນບ້ານເປົ້າ ໝາຍຂອງໂຄງການ;
- ປະສານງານກັບລະຫວ່າງສະມາຄົມ SAEDA ວຽງຈັນ, ແລະ ພາກລັດຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
- ຕິດຕາມ ກວດກາ ແລະ ຊຸກຍູ້ວຽກງານຂອງໂຄງການທີ່ຮັບຜິດຊອບ.
- ລາຍງານການຈັດຕັ້ງກິດຈະກຳ ປະຈຳເດືອນ ແລະ ປະຈຳປີ ໃຫ້ສາຍງານ ແລະ ຄູ່ຮ່ວມງານຕາມຄວາມຕ້ອງການ.

**ຄຸນນະວຸດ ແລະ ມາດຖານຕ້ອງການ:**

- ຮຽນຈົບປະລິນຍາຕີ ຫຼື ທຽບເທົ່າ ດ້ານກະສິກຳ ແລະ ອື່ນໆທີ່ກ່ຽວຂ້ອງ;
- ສັນຊາດລາວ ມີອາຍຸລະຫວ່າງ 25-50 ປີ;
- ມີປະສົບການເຮັດວຽກດ້ານກະສິກຳ ມາກ່ອນຫຼາຍກວ່າ 3-5 ປີ;
- ເຄີຍເຮັດວຽກນຳພາກລັດ ຫຼື ອົງການຈັດຕັ້ງສາກົນ ຫຼື ສະມາຄົມ ຫຼື ບໍລິສັດ;
- ສາມາດນຳໃຊ້ຄອມພິວເຕີ : Word, Excel, Power point, Publisher, ອິນເຕີເນັດ ແລະ ອື່ນໆ;
- ສາມາດເວົ້າ ແລະ ຂຽນພາສາອັງກິດໄດ້ດີພໍສົມຄວນ;
- ຖ້າເປັນຄົນທ້ອງຖິ່ນຖານຢູ່ນະຄອນຈຳປາສັກຈະພິຈາລະນາເປັນພິເສດ;
- ມີສຸຂະພາບແຂງແຮງດີ ແລະ ສາມາດເຮັດວຽກໃນເຂດຫ່າງໄກສອກຫລີກໄດ້;
- ມີຄວາມຮັບຜິດຊອບສູງ, ມີຫົວຄິດປະດິດສ້າງ, ກະຕືລືລົ້ນໃນການຮຽນຮູ້ເອົາບົດຮຽນອັນໃໝ່, ມີຄວາມອົດທົນ, ມີຄວາມອ່ອນໄຫວ ແລະ ການເຮັດວຽກເປັນທີມໄດ້ດີ;
- ຈະຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ;

ທ່ານໃດສົນໃຈສາມາດຍື່ນຄຳຮ້ອງສະໝັກຂຽນດ້ວຍຕົວເອງ ພ້ອມດ້ວຍ ຊີວະປະຫວັດ, ໃບປະ ກາດ, ໃບຜ່ານງານ, ໃບແຈ້ງໂທດ, ອັດປື້ມສຳມະໂນຄົວ/ບັດປະຈຳຕົວ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງມາທີ່. ສະເກນ ສົ່ງມາທາງອີແມ່ວ: infor.saedalaos@gmail.com;

ປິດຮັບສະໝັກ ວັນທີ **07/09/2024**